1-877-328-9677

ຈະໃຊ້ບັດ EBT ຂອງທ່ານຊື້ຂອງໄດ້ຢ່າງໃດ?

ກ່ອນທີ່ທ່ານຈະຊື້ຂອງ, ກວດເບິ່ງເງິນສ່ວນເຫລືອຂອງທ່ານເສັຍກ່ອນດ້ວຍການເບິ່ງຢູ່ໃນໃບຮັບໃບສຸດທ້າຍ ຫລື ໂທຣະສັບ ຫາຜແນກບໍຣິການລູກຄ້າ ໂດຍບໍ່ເສັຍຄ່າທີ່ 1-877-328-9677. ເງິນສ່ວນເຫລືອນີ້ຈະເປັນຈຳນວນເງິນສ່ວນຫລາຍທີ່ທ່ານສາມາດຈ່າຍດ້ວຍບັດຂອງທ່ານ.

ຂັ້ນ 1 ເອົາຂອງທີ່ທ່ານຊື້ໄປຫາບ່ອນກວດຂອງອອກ. ທ່ານອາດຈະຕ້ອງໄດ້ແຍກອາຫານທີ່ທ່ານມີສິດແລະບໍ່ມີສິດຊື້ອອກຈາກ ກັນ, ນີ້ກໍ່ຂຶ້ນກັບບາງຫ້າງ. ບອກພນັກງານຂາຍຂອງວ່າທ່ານຢາກໃຊ້ເງິນຊ່ວຍເຫລືອອັນໃດ, "ຟູດສແຕັມ" ຫລື "ເງິນສົດ". ທ່ານອາດຈະໃຊ້ໄດ້ຫມົດທັງສອງຢ່າງ ແຕ່ວ່າທ່ານຕ້ອງຮູດບັດຂອງທ່ານເວລາເອົາເງິນເຂົ້າ ແຕ່ລະຄັ້ງ.

ຂັ້ນ 2 ຮູດບັດຂອງທ່ານຜ່ານເຄື່ອງຮັບບັດຂອງລາຍການຂາຍ (POS) ຫລື ຍື້ນບັດ EBT ຂອງທ່ານໃຫ້ພນັກງານຂາຍຂອງ.

ຂັ້ນ 3 ຕີເລກສ່ວນຕົວສີ່ໂຕ (PIN) ຂອງທ່ານເຂົ້າໄປ. ເຄື່ອງຮັບບັດຈະສະແດງ **** ໃຫ້ເຫັນແທນທີ່ຈະເປັນໂຕເລກທີ່ທ່ານຕີເຂົ້າໄປ.

ຂັ້ນ 4 ກົດເຄື່ອງຫມາຍ Enter. ຖ້າທ່ານພວມໃຊ້ເງິນຊ່ວຍເຫລືອແບບເງິນສົດ ແລະ ທ່ານຢາກໄດ້ເງິນສົດກັບມາ, ຈົ່ງບອກພນັກງານຂາຍຂອງຈຳນວນເງິນສົດທີ່ທ່ານຢາກໄດ້.

ຂັ້ນ 5 ພນັກງານຂາຍຂອງຈະຕີຈຳນວນເງິນຂອງຟດສແຕັມ ຫລື ເງິນສົດທີ່ທ່ານໄດ້ຊື້. ຖ້າຈຳນວນນັ້ນຖືກຕ້ອງ ທ່ານກໍກົດເຄື່ອງຫມາຍ "OK" ຫລື "YES".

ຂັ້ນ 6 ທ່ານຈະໄດ້ຮັບສຳເນົາໃບຮັບຊຶ່ງຈະບົ່ງບອກ:
- ຊື່ ແລະ ທີ່ຢູ່ຂອງຫ້າງຄ້າ
- ຈຳນວນເງິນທີ່ທ່ານຊື້
- ເງິນສ່ວນເຫລືອອັນໃຫມ່ຂອງທ່ານ

ຂັ້ນ 7 ເກັບມ້ຽນໃບຮັບຂອງທ່ານໄວ້ ເພື່ອທ່ານຈະຫດ້ຮູ້ຈຳນວນເງິນສ່ວນເຫລືອຂອງທ່ານເວລາຈະໄປຊື້ຂອງຄັ້ງຕໍ່ໄປ.

ຈຳໄວ້ວ່າ, ທ່ານຈະບໍ່ຖືກໃຫ້ຈ່ານຄ່າທັນນຽມທີ່ທ່ານໃຊ້ເງິນຊ່ວຍເຫລືອແບບຟູດສແຕັນຂອງທ່ານ ແລະ ທ່ານກໍ່ຈະບໍ່ໄດ້ເງິນ ສົດ ຫລື ເງິນທອນກັບມາຄືນຈາກແອັກຄ້າວຟູດສແຕັນຂອງທ່ານ.

ຈະໃຊ້ບັດ EBT ຂອງທ່ານຢູ່ຕູ້ ATM ໄດ້ຢ່າງໃດ?

ຂັ້ນ 1 ສອດ ຫລື ຮູດ ບັດຂອງທ່ານຢູ່ຕູ້ ATM.

ຂັ້ນ 2 ຕີເລກສີ່ໂຕຂອງເລກປະຈຳຕົວ ຫລື ເລກພິນຂອງທ່ານຢູ່ເທິງແປ້ນພິມ ແລະ ກົດເຄື່ອງຫມາຍ "OK" ຫລື "YES".

ຂັ້ນ 3 ເລືອກ "Withdraw Cash" (ຖອນເງິນສົດ) ແລ້ວເລືອກ "Checking" (ກວດເບິ່ງ) (ຕູ້ ATM ບາງບ່ອນອາດ ຈະໃຊ້ຄຳຕ່າງກັນ.

ຂັ້ນ 4 ຕີຈຳນວນເງິນທີ່ທ່ານຢາກຖອນໃນຈຳນວນດອນລາທັງຫມົດ (ຕົວຢ່າງ, $20, $200, ຫລື ຈຳນວນອື່ນໆ) ເງິນ ໃບສິບ ແລະ ໃບຊາວ ແມ່ນໃບຈຳນວນນ້ອຍທີ່ສຸດ.

ຂັ້ນ 5 ຕູ້ ATM ຈະສະແດງຈໍນຶ່ງທີ່ບອກທ່ານວ່າຄ່າທັນນຽມເທົ່າໃດ. ຖ້າທ່ານຢາກຮັບກໍກົດ "Continue" (ຕໍ່ໄປ). ຖ້າທ່ານບໍ່ຕ້ອງການຈ່ານຄ່າທັນນຽມ, ກົດ "Cancel" (ເລີກລົ້ມ).

ຂັ້ນ 6 ຕູ້ ATM ຈະໃຫ້ເງິນສົດ ແລະ ໃບຮັບແກ່ທ່ານ ບໍ່ແມ່ນທຸກໆຕູ້ ATM ຈະສະແດງເງິນສ່ວນເຫລືອຂອງທ່ານຢູ່ ເທິງໃບຮັບນັ້ນ.

ຂັ້ນ 7 ເກັບມ້ຽນໃບຮັບຂອງທ່ານເພື່ອທ່ານຈະໄດ້ຮູ້ເງິນສ່ວນເຫລືອຂອງທ່ານ.

www.ebtproject.ca.gov

ຈະໃຊ້ບັດ EBT ຂອງທ່ານເອົາເງິນສົດຢູ່ຫູ້ລາຍການຂາຍ POS ໄດ້ຢ່າງໃດ?

ຂັ້ນ 1 ຖາມພນັກງານຂາຍຂອງເບິ່ງວ່າທ່ານສາມາດຖອນເງິນສົດຢູ່ຫ້າງຄ້າໄດ້ບໍ່ ແລະ ຕ້ອງເສັຍຄ່າທັນນຽມຫລືບໍ່.

ຂັ້ນ 2 ຮດບັດຂອງທ່ານຜ່ານເຄື່ອງຮັບບັດຂອງລາຍການຂາຍ (POS) ຫລື ຍື້ນບັດ EBT ຂອງທ່ານໃຫ້ພນັກງານຂາຍຂອງ.

ຂັ້ນ 3 ຕີເລກສ່ວນຕົວ (PIN) ສີ່ໂຕຂອງທ່ານເຂົ້າໄປ. ເຄື່ອງຮັບບັດຈະສະແດງ **** ໃຫ້ເຫັນແທນທີ່ຈະເປັນໂຕເລກທີ່ທ່ານຕີເຂົ້າໄປ.

ຂັ້ນ 4 ກົດເຄື່ອງຫມາຍ "Enter".

ຂັ້ນ 5 ບອກພນັກງານຂາຍຂອງຈຳນວນເງິນສົດທີ່ທ່ານຮັບ.

ຂັ້ນ 6 ພນັກງານຂາຍຂອງຕີຈຳນວນເງິນທີ່ທ່ານຕ້ອງການຖອນຈາກແອັກຄ້າວ ຂອງທ່ານເຂົ້າໄປ. ຖ້າຈຳນວນນັ້ນຖືກຕ້ອງ, ທ່ານກົດເຄື່ອງຫມາຍ "OK" ຫລື "YES".

ຂັ້ນ 7 ທ່ານຈະໄດ້ຮັບໃບຮັບພິມອອກມາທີ່ຈະບອກ:
- ຊື່ ແລະ ທີ່ຢູ່ຂອງຫ້າງຄ້າ
- ຈຳນວນເງິນສົດທີ່ທ່ານຖອນ
- ເງິນສ່ວນເຫລືອອັນໃຫມ່ຂອງທ່ານ

ຂັ້ນ 8 ເກັບມ້ຽນໃບຮັບຂອງທ່ານເພື່ອທ່ານຈະໄດ້ຮູ້ເງິນສ່ວນເຫລືອອັນ ໃຫມ່ຂອງທ່ານ.

ຈະກວດເບິ່ງເງິນສ່ວນເຫລືອໃນບັດ EBT ຂອງທ່ານໄດ້ຢ່າງໃດ?

ເງິນສ່ວນເຫລືອອັນໃຫມ່ຂອງທ່ານຈະຖືກພິມໄວ້ຢູ່ເທິງໃບຮັບໃບສຸດທ້າຍຂອງທ່ານ. **ຈົ່ງເກັບມ້ຽນໃບຮັບຂອງທ່ານສະເມີ.** ຖ້າຫາກທ່ານເຮັດໃບຮັບໃບຫາຍເສັຍ, ທ່ານສາມາດໂທຣະສັບຫາຜແນກບໍຣິການລູກຄ້າ ຫລື ກວດເບິ່ງເງິນສ່ວນເຫລືອ ຂອງທ່ານຕາມຕູ້ ATM ຫລື ຕາມຕູ້ POS. ກວດເບິ່ງເງິນສ່ວນເຫລືອຂອງ ທ່ານຕາມຕູ້ ATM ທ່ານຈະຕ້ອງເສັຍຄ່າ 25 ເຊັນ.

ຖ້າຫາກບັດຂອງທ່ານເສັຍ ຫລື ຖືກລັກ, ຈົ່ງໂທຣະສັບຫາຜແນກບໍຣິການລູກ ຄ້າໃນທັນທີຕາມເບີທີ່ບໍ່ຕ້ອງເສັຍຄ່າ ທີ່ 1-877-328-9678. ພວກເຂົາຈະບອກທ່ານວ່າຈະຂໍເອົາບັດໃຫມ່ໄດ້ຢ່າງໃດ. ຖ້າຫາກທ່ານບໍ່ໄດ້ ແຈ້ງວ່າບັດຂອງທ່ານເສັຍ ຫລື ຖືກລັກ, ຄົນອື່ນສາມາດໃຊ້ບັດຂອງທ່ານຈ່ຍເງິນ ຊ່ວຍເຫລືອຂອງທ່ານຫມົດ ແລະ ເງິນນີ້ຈະບໍ່ຖືກໃຊ້ຄືນ.

ໂທຣະສັບຫາຜແນກບໍຣິການລູກຄ້າໄດ້ໂດຍບໍ່ເສັຍຄ່າ ຖ້າຫາກວ່າ:

- ບັດຂອງທ່ານເສັຍ ຫລື ຖືກລັກ
- ບັດຂອງທ່ານໃຊ້ບໍ່ໄດ້
- ທ່ານຢາກປ່ຽນເລກສ່ວນຕົວ (PIN) ຂອງທ່ານຍ້ອນວ່າທ່ານລືມ ຫລື ຖ້າຫາກວ່າຄົນອື່ນຮູ້ເລກສ່ວນຕົວ (PIN) ຂອງທ່ານ ທ້ອງການຊ່ວຍເຫລືອຊຸມ ຊົນອາດຈະສາມາດຊ່ວຍທ່ານປ່ຽນເລກສ່ວນຕົວ (PIN) ຂອງທ່ານ
- ທ່ານຢາກຮູ້ວ່າທ່ານຍັງມີເງິນເຫລືອເທົ່າໃດຢູ່ໃນແອັກຄ້າວຂອງທ່ານ
- ທ່ານໄດ້ຈ່ຍຄ່າຊື້ຂອງແລ້ວ ແຕ່ ບໍ່ໄດ້ຮັບຂອງນັ້ນ ຫລື ຖ້າທ່ານໄດ້ຈ່ຍຫລາຍເກີນກວ່າທີ່ທ່ານຊື້
- ທ່ານມີຄຳຖາມ ຫລື ບັນຫາອື່ນໆ.

24 ຊົ່ວໂມງຕໍ່ມື້ / 7 ມື້ຕໍ່ອາທິດ

1-877-328-9677

TTY: 1-800-735-2929

OSP 02 71309

Flex your POWER

© 2001 State of California

ເບິ່ງຕາມແຜນຢູ່ໃນປື້ມຝຶກຫັດ EBT ຂອງທ່ານ ແລະ ຕີວັນທີ່ເງິນຊ່ວຍ ເຫລືອຂອງທ່ານຈະເຂົ້າແອັກຄ້າວຂອງທ່ານເຂົ້າໄປ:

_____

(ເງິນຊ່ວຍເຫລືອແບບຟູດສແຕັມ: ຈາກວັນທີ 1 ຫາວັນທີ 10 ຂອງເດືອນ)

_____

(ເງິນຊ່ວຍເຫລືອແບບເງິນສົດ: ວັນທີ 1, ວັນທີ 2 ຫລື ວັນທີ 3 ຂອງເດືອນ)

USDA is an equal opportunity provider and employer.

PUB 389 (Lao)

OSP 02 71309

Flex your POWER

© 2001 State of California

State of California
Gray Davis, Governor
Health and Human Services Agency
Grantland Johnson, Secretary
Department of Social Services
Rita Saenz, Director